**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1772-- /ສສກ

ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2026

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດ ໂຄງປະກອບກົງຈັກການຈັດຕັ້ງ ທີ່ຂຶ້ນກັບບັນດາ ຫ້ອງການ, ກົມ, ສະຖາບັນ ແລະ ສຳນັກພິມສຶກສາ ແລະ ກິລາ ຂອງກະຊວງສຶກສາທິການ ແລະ ກິລາ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 69/ສພຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບ ເລກທີ 90/ນຍ, ລົງວັນທີ 20 ເມສາ 2026;
- ອີງຕາມ ມະຕິກອງປະຊຸມຄະນະປະຈຳພັກກະຊວງສຶກສາທິການ ແລະ ກິລາ ຄັ້ງວັນທີ 01 ເມສາ 2026.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

**ມາດຕາ 1** ເຫັນດີຮັບຮອງ ໂຄງປະກອບກົງຈັກການຈັດຕັ້ງ ທີ່ຂຶ້ນກັບ ຫ້ອງການ, ກົມ, ສະຖາບັນ ແລະ ສຳນັກພິມສຶກສາ ແລະ ກິລາ ທີ່ມີການປັບປຸງຈຳນວນ 10 ພາກສ່ວນ ປະກອບມີ 57 ພະແນກ, 04 ຫ້ອງການ, 01 ຫ້ອງສະໝຸດ, 04 ສູນ, 12 ຂະແໜງ ແລະ 02 ລັດວິສາຫະກິດ ຊຶ່ງມີລາຍລະອຽດດັ່ງນີ້:

1. ຫ້ອງການ ປະກອບມີ 8 ພະແນກ;
2. ກົມຈັດຕັ້ງ ປະກອບມີ 7 ພະແນກ ແລະ 1 ຫ້ອງການ;
3. ກົມກວດກາ ປະກອບມີ 4 ພະແນກ;
4. ກົມແຜນການ ແລະ ການເງິນ ປະກອບມີ 7 ພະແນກ ແລະ 1 ຫ້ອງການ;
5. ກົມຮ່ວມມືກັບຕ່າງປະເທດ ປະກອບມີ 5 ພະແນກ ແລະ 2 ຫ້ອງການ;
6. ກົມປະກັນຄຸນນະພາບການສຶກສາ ປະກອບມີ 5 ພະແນກ;
7. ກົມສາມັນສຶກສາ ປະກອບມີ 8 ພະແນກ;
8. ກົມພັດທະນາຄູ ແລະ ການບໍລິຫານການສຶກສາ ປະກອບມີ 6 ພະແນກ;
9. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ປະກອບມີ 1 ພະແນກ, 4 ສູນ ແລະ 1 ຫໍສະໝຸດ;
10. ສຳນັກພິມສຶກສາ ແລະ ກິລາ ປະກອບມີ 6 ພະແນກ ແລະ 2 ລັດວິສາຫະກິດ.

**(ຊຶ່ງລາຍລະອຽດ ໄດ້ມີເອກະສານຄັດຕິດມາພ້ອມນີ້).**

ສໍາລັບ ໂຄງປະກອບກົງຈັກການຈັດຕັ້ງທີ່ຂຶ້ນກັບ ກົມການສຶກສາກ່ອນໄວຮຽນ, ກົມອາຊີວະສຶກສາ, ກົມການສຶກສາຊັ້ນສູງ, ກົມການສຶກສານອກໂຮງຮຽນ, ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ, ກົມກິລາລະດັບສູງ, ກົມຄຸ້ມຄອງວິທະຍາສາດ, ຫ້ອງການສະພາວິທະຍາສາດແຫ່ງຊາດ, ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກໍາ ແລະ ສູນການສຶກສາ ເພື່ອພັດທະນາຊຸມຊົນຂົງເຂດອາຊີຕາເວັນອອກສ່ຽງໃຕ້ ແມ່ນເຫັນດີຮັກສາໄວ້ຄືເກົ່າ.

**ມາດຕາ 2** ມອບໃຫ້ ຫ້ອງການກະຊວງ, ບັນດາກົມ, ອົງການທຽບເທົ່າກົມ, ສະຖາບັນ, ສູນ ແລະ ພາກສ່ວນທີ່ກ່ຽວຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດ ຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນດີ, ພ້ອມທັງ ລາຍງານການຈັດຕັ້ງປະຕິບັດໃນແຕ່ລະໄລຍະ.

**ມາດຕາ 3** ບັນດາ ຫ້ອງການກະຊວງ, ບັນດາກົມ, ອົງການທຽບເທົ່າກົມ, ສະຖາບັນ, ສູນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**




ທອງສະລິດ ມັງໜໍ່ເມກ

**ບ່ອນນໍາສົ່ງ:**

1. ຄະນະລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ 1 ສະບັບ;
2. ຫ້ອງການກະຊວງສຶກສາທິການ ແລະ ກິລາ 1 ສະບັບ;
3. ກົມ, ສະຖາບັນ, ສູນຕ່າງໆ ທີ່ກ່ຽວຂ້ອງ ພາກສ່ວນລະ 1 ສະບັບ;
4. ເກັບມ້ຽນ 3 ສະບັບ.

# ຕາຕາລາງ ກົງຈັກການຈັດຕັ້ງ ຂອງ ບັນດາ ຫ້ອງການ, ກົມ, ສະຖາບັນ ແລະ ສູນ
# ພາຍໃນສຳນັກກະຊວງສຶກສາທິການ ແລະ ກິລາ ທີ່ມີການປັບປຸງ ຈຳນວນ 10 ພາກສ່ວນ ໃນປີ 2026

| ລ/ດ | ລາຍຊື່ກົມ | ພະແນກ (ເກົ່າ) | ປັບປຸງ 2026 | ໝາຍເຫດ |
|---|---|---|---|---|
| 1 | ຫ້ອງການກະຊວງ | 1. ພະແນກບໍລິຫານ ແລະ ປະຊາສຳພັນ;<br>2. ພະແນກເລຂານຸການ ແລະ ພິທີການ;<br>3. ພະແນກການເງິນ;<br>4. ພະແນກຄຸ້ມຄອງຊັບສິນ ສຳນັກກະຊວງ;<br>5. ພະແນກຄົ້ນຄວ້າ-ສັງລວມ;<br>6. ພະແນກຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ;<br>7. ພະແນກສົ່ງເສີມການລົງທຶນພາກເອກະຊົນ; | 1. ພະແນກບໍລິຫານ ແລະ ພິທີການ;<br>2. ພະແນກຄົ້ນຄວ້າ-ສັງລວມ ແລະ ເລຂານຸການ;<br>3. ພະແນກຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ;<br>4. ພະແນກຄຸ້ມຄອງການລົງທຶນພາກເອກະຊົນ;<br>5. ພະແນກໂຄສະນາ-ຂ່າວສານ;<br>6. ພະແນກຄຸ້ມຄອງໂຄງການ;<br>7. ພະແນກຄຸ້ມຄອງຊັບສິນ ແລະ ອອກແບບ-ກໍ່ສ້າງ.<br>8. ພະແນກຄຸ້ມຄອງສາງ ແລະ ການຂົນສົ່ງ. | |
| 2 | ກົມຈັດຕັ້ງ | 1. ພະແນກບໍລິຫານ ແລະ ກົງຈັກການຈັດຕັ້ງ;<br>2. ພະແນກກໍ່ສ້າງພັກ ແລະ ອົງການຈັດຕັ້ງມະຫາຊົນ;<br>3. ພະແນກປ້ອງກັນພັກ-ພະນັກງານ ແລະ ປ້ອງກັນພາຍໃນ;<br>4. ພະແນກຄຸ້ມຄອງລັດຖະກອນ;<br>5. ພະແນກພັດທະນາລັດຖະກອນ;<br>6. ພະແນກນະໂຍບາຍ ແລະ ຍ້ອງຍໍ. | 1. ພະແນກບໍລິຫານ ແລະ ກົງຈັກການຈັດຕັ້ງ;<br>2. ພະແນກກໍ່ສ້າງພັກ ແລະ ອົງການຈັດຕັ້ງມະຫາຊົນ;<br>3. ພະແນກປ້ອງກັນພັກ-ພະນັກງານ ແລະ ປ້ອງກັນພາຍໃນ;<br>4. ພະແນກຄຸ້ມຄອງລັດຖະກອນ;<br>5. ພະແນກພັດທະນາລັດຖະກອນ;<br>6. ພະແນກນະໂຍບາຍ ແລະ ຍ້ອງຍໍ;<br>7. ພະແນກພັດທະນານິຕິກຳ;<br>8. ຫ້ອງການພັດທະນາຊັບພະຍາກອນມະນຸດ. | |

| | | | | |
|---|---|---|---|---|
| 3 | ກົມກວດກາ | 1. ພະແນກ ຕິດຕາມ, ປະເມີນຜົນ ແລະ ບໍລິຫານ;<br>2. ພະແນກ ກວດກາພັກ ແລະ ຄົ້ນຄ້ວາຄຳຮ້ອງ-ຄຳສະເໜີ;<br>3. ພະແນກ ກວດກາລັດ;<br>4. ພະແນກ ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ. | 1. ພະແນກ ບໍລິຫານ ແລະ ຄົ້ນຄ້ວາຄຳຮ້ອງ-ຄຳສະເໜີ;<br>2. ພະແນກ ກວດກາພັກ;<br>3. ພະແນກ ກວດກາລັດ;<br>4. ພະແນກ ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ. | |
| 4 | ກົມແຜນການ ແລະ ການເງິນ | ➢ **ກົມແຜນການ**<br>1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກແຜນການ;<br>3. ພະແນກຄຸ້ມຄອງໂຄງການ;<br>4. ຫ້ອງການພັດທະນາຊັບພະຍາກອນມະນຸດ;<br>5. ຫ້ອງການປະສານງານສາກົນ ເພື່ອການສຶກສາ;<br>6. ສູນສະຖິຕິການສຶກສາ ແລະ ກິລາ.<br>1) ຂະແໜງສະຖິຕິ ແລະ ແຜນທີ່ ການສຶກສາ ແລະ ກິລາ;<br>2) ຂະແໜງວິເຄາະ ແລະ ເຜີຍແຜ່ຂໍ້ມູນ.<br>➢ **ການເງິນ**<br>1. ພະແນກບໍລິຫານ ແລະ ກວດກາການເງິນ;<br>2. ພະແນກງົບປະມານ;<br>3. ພະແນກບັນຊີ;<br>4. ພະແນກຄຸ້ມຄອງການ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ<br>5. ພະແນກຄຸ້ມຄອງຊັບສິນຂອງລັດ. | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກການເງິນ;<br>3. ພະແນກແຜນການ;<br>4. ພະແນກງົບປະມານ;<br>5. ພະແນກບັນຊີ;<br>6. ຫ້ອງການປະສານງານສາກົນເພື່ອການສຶກສາ;<br>7. ພະແນກສະຖິຕິການສຶກສາ ແລະ ກິລາ<br>8. ພະແນກເຕັກໂນໂລຊີການສຶກສາ ແລະ ກິລາ. | |

| | | | | |
|---|---|---|---|---|
| 5 | ກົມຮ່ວມມືກັບຕ່າງປະເທດ | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກຮ່ວມມືສອງຝ່າຍ;<br>3. ພະແນກຮ່ວມມືຫຼາຍຝ່າຍ;<br>4. ພະແນກສົນທິສັນຍາ ແລະ ຮ່ວມມືກັບອົງການຈັດຕັ້ງສາກົນ;<br>5. ຫ້ອງການຄະນະກຳມາທິການແຫ່ງຊາດລາວ ເພື່ອອຸຍແນສໂກ;<br>6. ຫ້ອງການຕ້ານສານຕ້ອງຫ້າມໃນກິລາແຫ່ງຊາດລາວ. | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກຮ່ວມມືສອງຝ່າຍ;<br>3. ພະແນກຮ່ວມມືຫຼາຍຝ່າຍ;<br>4. ພະແນກສົນທິສັນຍາ ແລະ ຮ່ວມມືກັບອົງການຈັດຕັ້ງສາກົນ;<br>5. ພະແນກຄຸ້ມຄອງ ທຶນການສຶກສາ ແລະ ນັກຮຽນ-ນັກສຶກສາ;<br>6. ຫ້ອງການຄະນະກຳມາທິການແຫ່ງຊາດລາວເພື່ອອຸຍແນສໂກ;<br>7. ຫ້ອງການຕ້ານສານຕ້ອງຫ້າມໃນກິລາແຫ່ງຊາດລາວ. | |
| 6 | ກົມປະກັນຄຸນນະພາບການສຶກສາ | 1. ພະແນກ ບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກ ພັດທະນານິຕິກຳ;<br>3. ພະແນກ ປະກັນຄຸນນະພາບການສຶກສາ;<br>4. ພະແນກ ຄຸ້ມຄອງຂອບວຸດທິການສຶກສາ;<br>5. ພະແນກ ໂຄສະນາເຜີຍແຜ່, ຕິດຕາມ ແລະ ປະເມີນຜົນ. | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກທົດສອບ ແລະ ສອບເສັງ;<br>3. ພະແນກປະກັນຄຸນນະພາບການສຶກສາ ຂັ້ນພື້ນຖານ;<br>4. ພະແນກປະກັນຄຸນນະພາບອາຊີວະສຶກສາ ແລະ ການສຶກສາຊັ້ນສູງ;<br>5. ພະແນກຕິດຕາມ ແລະ ປະເມີນຜົນ. | |
| 7 | ກົມສາມັນສຶກສາ | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກປະຖົມສຶກສາ;<br>3. ພະແນກມັດທະຍົມສຶກສາຕອນຕົ້ນ;<br>4. ພະແນກມັດທະຍົມສຶກສາຕອນປາຍ;<br>5. ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ;<br>6. ພະແນກພາສາຕ່າງປະເທດ;<br>7. ຫ້ອງການຄຸ້ມຄອງໂຄງການສາມັນສຶກສາ. | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກປະຖົມສຶກສາ;<br>3. ພະແນກມັດທະຍົມສຶກສາຕອນຕົ້ນ;<br>4. ພະແນກມັດທະຍົມສຶກສາຕອນປາຍ;<br>5. ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ.<br>6. ພະແນກຄຸ້ມຄອງການຮຽນ-ການສອນພາສາຕ່າງປະເທດ;<br>7. ພະແນກສົ່ງເສີມອາຫານ ແລະ ໂພຊະນາການໃນໂຮງຮຽນ;<br>8. ພະແນກສຶກສາຮຽນຮ່ວມ-ພິການ; | ໒໕ |

| | | | | |
|---|---|---|---|---|
| 8 | ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ<br>2. ສູນພັດທະນາຫຼັກສູດ<br>- ຂະແໜງການສຶກສາກ່ອນໄວຮຽນ;<br>- ຂະແໜງຄະນິດສາດ;<br>- ຂະແໜງວິທະຍາສາດ;<br>- ຂະແໜງສັງຄົມສຶກສາ;<br>- ຂະແໜງພະລະ ແລະ ສິລະປະສຶກສາ.<br>3. ສູນພັດທະນາສື່ການຮຽນການສອນ<br>- ຂະແໜງການພິມ;<br>- ຂະແໜງສື່ສິ່ງພິມ;<br>- ຂະແໜງສື່ເອເລັກໂຕຣນິກ ແລະ ການສຶກສາທາງໄກ.<br>4. ສູນສົ່ງເສີມພາສາຕ່າງປະເທດ<br>- ຂະແໜງພາສາອັງກິດ;<br>- ຂະແໜງພາສາຝຣັ່ງ ແລະ ພາສາຕ່າງປະເທດອື່ນໆ<br>5. ສູນຄົ້ນຄວ້າ ແລະ ປະເມີນຜົນການສຶກສາ<br>- ຂະແໜງຄົ້ນຄວ້າການສຶກສາ ແລະ ກິລາ;<br>- ຂະແໜງປະເມີນຜົນການສຶກສາ;<br>- ຂະແໜງກວດກາ.<br>6. ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ<br>- ຂະແໜງວິທະຍຸສຶກສາ ແລະ ກິລາ;<br>- ຂະແໜງໂທລະພາບສຶກສາ ແລະ ກິລາ (Lao ESTV);<br>- ຂະແໜງວາລະສານ ແລະ ໜັງສືພິມສຶກສາ, ວິທະຍາສາດ ແລະ ກິລາ.<br>7. ສູນຄົ້ນຄວ້າພາສາລາວ | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ<br>2. ສູນພັດທະນາຫຼັກສູດ<br>1) ຂະແໜງການສຶກສາກ່ອນໄວຮຽນ;<br>2) ຂະແໜງຄະນິດສາດ;<br>3) ຂະແໜງວິທະຍາສາດ;<br>4) ຂະແໜງສັງຄົມສຶກສາ;<br>5) ຂະແໜງພະລະ ແລະ ສິລະປະສຶກສາ.<br>3. ສູນພັດທະນາສື່ການຮຽນການສອນ<br>1) ຂະແໜງການພິມ;<br>2) ຂະແໜງສື່ສິ່ງພິມ;<br>3) ຂະແໜງສື່ເອເລັກໂຕຣນິກ ແລະ ການສຶກສາທາງໄກ.<br>4. ສູນສົ່ງເສີມພາສາຕ່າງປະເທດ<br>1) ຂະແໜງພາສາອັງກິດ;<br>2) ຂະແໜງພາສາຝຣັ່ງ ແລະ ພາສາຕ່າງປະເທດອື່ນໆ<br>5. ສູນຄົ້ນຄວ້າພາສາລາວ<br>1) ຂະແໜງຄົ້ນຄວ້ານະໂຍບາຍ ແລະ ຫຼັກສູດພາສາລາວ;<br>2) ຂະແໜງຄົ້ນຄວ້າການສອນພາສາລາວສຳລັບຊົນເຜົ່າ, ພາສາມື ແລະ ອັກສອນນູນ.<br>6. ຫ້ອງສະໝຸດ. | |

| | | | | |
|---|---|---|---|---|
| | | - ຂະແໜງຄົ້ນຄວ້ານະໂຍບາຍ ແລະ ຫຼັກສູດພາສາລາວ;<br>- ຂະແໜງຄົ້ນຄວ້າການສອນພາສາລາວສຳລັບຊົນເຜົ່າ.<br>8. ຫ້ອງສະໝຸດ. | | |
| 9 | ກົມພັດທະນາຄູ ແລະ ການບໍລິຫານການສຶກສາ, | ໂຄງປະກອບກົງຈັກຂອງກົມສ້າງຄູ ປະກອບມີ 04 ພະແນກ ແລະ 01 ສູນ ຄື:<br>1. ພະແນກ ບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກ ກໍ່ສ້າງຄູ;<br>3. ພະແນກ ບຳລຸງຄູ;<br>4. ພະແນກ ກວດກາ, ຕິດຕາມ ແລະ ປະເມີນຜົນ;<br>5. ສູນພັດທະນາຄູ.<br>1) ຂະແໜງພັດນາຫຼັກສູດ ແລະ ສື່ການຮຽນ-ການສອນ;<br>2) ຂະແໜງຝຶກອົບຮົມ.<br>**ໂຄງປະກອບກົງຈັກຂອງສະຖາບັນພັດທະນາການບໍລິຫານການສຶກສາ ມີ 4 ພະແນກ ຄື:**<br>1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກຝຶກອົບຮົມ;<br>3. ພະແນກພັດທະນາຫຼັກສູດ;<br>4. ພະແນກຄົ້ນຄວ້າ-ວິໄຈ, ຕິດຕາມ, ກວດກາ ແລະ ປະເມີນຜົນ; | 1. ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກກໍ່ສ້າງ ແລະ ບຳລຸງວິຊາຊີບຄູ;<br>3. ພະແນກຝຶກອົບຮົມ;<br>4. ພະແນກພັດທະນາຫຼັກສູດ;<br>5. ພະແນກຄົ້ນຄວ້າ ແລະ ວິໄຈ;<br>6. ພະແນກ ກວດກາ, ຕິດຕາມ ແລະ ປະເມີນຜົນ;<br>ນອກນັ້ນຍັງມີ ສູນຝຶກອົບຮົມຜູ້ບໍລິຫານການສຶກສາວັງວຽງ ທີ່ຂຶ້ນກັບສະຖາບັນພັດທະນາການບໍລິຫານການສຶກສາ ຊຶ່ງມີຂໍ້ຕົກລົງພາລະບົດບາດສະເພາະຂອງສູນ. | |
| 10 | ສຳນັກພິມສຶກສາ ແລະ ກິລາ | 1. ພະແນກ ບໍລິຫານ ແລະ ຄົ້ນຄວ້າ-ສັງລວມ;<br>2. ພະແນກ ຄຸ້ມຄອງປຶ້ມ ແລະ ພັດທະນາສື່ການຮຽນການສອນ;<br>3. ພະແນກ ຄຸ້ມຄອງ ຕົ້ນສະບັບ ແລະ ການຈັດຊື້-ຈັດຈ້າງ;<br>4. ພະແນກ ຄຸ້ມຄອງສາງ ແລະ ການຂົນສົ່ງ. | 1. ພະແນກບໍລິຫານ-ການເງິນ;<br>2. ພະແນກແຜນການ ແລະ ການຕະຫຼາດ;<br>3. ພະແນກຈຳໜ່າຍ;<br>4. ພະແນກອອກແບບ-ບັນນາທິການ;<br>5. ພະແນກເຕັກນິກການພິມ;<br>6. ພະແນກສາງ ແລະ ການຂົນສົ່ງ. | ໕ |

| | | | | |
|---|---|---|---|---|
| | | | 7. ບໍລິສັດ ລັດວິສາຫະກິດ ໂຮງພິມສຶກສາ<br>8. ບໍລິສັດ ລັດວິສາຫະກິດ ອຸປະກອນການສຶກສາ | |

- **ສັງລວມ:** ກົງຈັກການຈັດຕັ້ງທີ່ມີການປັບປຸງ ຈຳນວນ 10 ພາກສ່ວນ (1 ຫ້ອງການ, 7 ກົມ 1 ສະຖາບັນ ແລະ 1 ສຳນັກພິມສຶກສາ ແລະ ກິລາ) ພ້ອມນັ້ນ ກົງຈັກພະແນກທີ່ຂຶ້ນກັບ ຫ້ອງການ, ກົມ, ສະຖາບັນ ແລະ ສຳນັກພິມສຶກສາ ແລະ ກິລາ ປະກອບມີ 57 ພະແນກ, 4 ຫ້ອງການ, 1 ຫ້ອງສະໝຸດ, 4 ສູນ ແລະ 12 ຂະແໜງ ຂຶ້ນກັບສູນຂອງສະຖາບັນ ແລະ 2 ລັດວິສະຫະກິດ ທີ່ຂຶ້ນກັບສຳນັກພິມ.

- **<u>ບັນດາ ຫ້ອງການ, ກົມ, ສະຖາບັນ ແລະ ສຳນັກພິມສຶກສາ ແລະ ກິລາ ຈຳນວນ 10 ພາກສ່ວນຄື:</u>**

1. ຫ້ອງການ ປະກອບມີ 8 ພະແນກ;
2. ກົມຈັດຕັ້ງ ປະກອບມີ 7 ພະແນກ ແລະ 1 ຫ້ອງການ;
3. ກົມກວດກາ ປະກອບມີ 4 ພະແນກ;
4. ກົມແຜນການ ແລະ ການເງິນ ປະກອບມີ 7 ພະແນກ, 1 ຫ້ອງການ;
5. ກົມຮ່ວມມືກັບຕ່າງປະເທດ ປະກອບມີ 5 ພະແນກ ແລະ 2 ຫ້ອງການ;
6. ກົມປະກັນຄຸນນະພາບການສຶກສາ ປະກອບມີ 5 ພະແນກ;
7. ກົມສາມັນສຶກສາ ປະກອບມີ 8 ພະແນກ;
8. ກົມພັດທະນາຄູ ແລະ ການບໍລິຫານການສຶກສາ ປະກອບມີ 6 ພະແນກ;
9. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ປະກອບມີ 1 ພະແນກ, 4 ສູນ ແລະ 1 ຫໍສະໝຸດ;
10. ສຳນັກພິມສຶກສາ ແລະ ກິລາ ປະກອບມີ 6 ພະແນກ ແລະ 2 ລັດວິສາຫະກິດ;